# ນັກຣົບແນວຄິດໃຕ້ຮົ່ມທຸງຂອງພັກ ປປ ລາວ.

ໃນຂະບວນວິວັດແຫ່ງການນຳພາຂອງພັກຕໍ່ພາລະກິດປະຕິວັດ ພັກເຮົາໄດ້ດຳເນີນກອງປະຊຸມສະເພາະວຽກງານການເມືອງ ແນວຄິດທົ່ວປະເທດມາແລ້ວ 4 ຄັ້ງເຊິ່ງແຕ່ລະຄັ້ງລ້ວນແຕ່ມີຄວາມໝາຍຄວາມສຳຄັນທີ່ແຕກຕ່າງກັນໂດຍຂຶ້ນກັບໜ້າທີ່ຂອງການປະຕິວັດໃນແຕ່ລະໄລຍະ ແລະສະພາບແວດລ້ອມທີ່ຕ່າງກັນ.

ກອງປະຊຸມວຽກງານການເມືອງ-ແນວຄິດທົ່ວປະທດຄັ້ງຫຼ້າສຸດ ໄດ້ເປີດຂຶ້ນໃນເດືອນກໍລະກົດ ປີ 2003 ເຊິ່ງເປີດຂຶ້ນທ່າມກາງບັນຍາກາດທີ່ທົ່ວພັກທົ່ວປວງຊົນເຮົາ ພວມສຸ່ມໃສ່ການຈັດຕັ້ງປະຕິບັດວຽກງານຍຸດທະສາດ ແລະ ໜ້າທີ່ຈຸດສຸມໃນພາລະກິດປຣູ່ນແປງໃໝ່ຢ່າງຮອບດ້ານທີ່ມີຫຼັກການຂອງພັກໃຫ້ປະກົດຜົນເປັນຈິງ. ແຕ່ປີ 2003 ເຖິງປັດຈຸບັນ ເປັນໄລຍະເວລາ 18 ປີແຫ່ງການປັບປຸງກໍ່ສ້າງຖັນແຖວນັກຣົບແນວຄິດຂອງພັກ ໃຫ້ມີຄວາມຮູ້, ຄວາມສາມາດໃນການນຳພາການປະຕິວັດ ຢູ່ປະເທດເຮົາດຳເນີນໄປຢ່າງໜັກແໜ້ນຕາມແນວທາງແຫ່ງການບູລະນະລະບອບປະຊາທິປະໄຕ ປະຊາຊົນກ້າວຂຶ້ນສັງຄົມນິຍົມພາຍໃຕ້ຄຳຂວັນທີ່ວ່າ ເຊີດຊູບົດບາດ ແລະ ຍົກສູງຄຸນນະພາບວຽກງານການເມືອງ-ແນວຄິດ ເພື່ອປຸກລະດົມການຫັນປ່ຽນທີ່ຕັ້ງຂອງມະຫາຊົນ, ຊຸກຍູ້ຂະບວນການຂອງມະຫາຊົນເຂົ້າຮ່ວມໃນການຈັດຕັ້ງປະຕິບັດບັນດາຈຸດໝາຍສູ້ຊົນ ແລະ ທິດທາງໜ້າທີ່ຂອງການປະຕິວັດໃນໄລຍະ ໃໝ່ໃຫ້ເປັນຂະບວນຟົດຟື້ນ; ສາມາດເຮັດໃຫ້ທົ່ວພັກ, ທົ່ວປວງຊົນຮັບຮູ້ ແລະ ເຊື່ອມຊຶມແນວທາງປຣູ່ນແປງໃໝ່ຂອງພັກ; ເຮັດໃຫ້ຄວາມເຊື່ອໝັ້ນຂອງທົ່ວສັງຄົມຕໍ່ການນຳພາຂອງພັກ ແລະ ອຸດົມການສັງຄົມນິຍົມໄດ້ຮັບການປັບປຸງເພີ່ມທະວີສູງຂຶ້ນຢ່າງບໍ່ຢຸດບໍ່ຢັ້ງ. ນັບແຕ່ຂະບວນການຕໍ່ສູ້ຂອງປະຊາຊົນລາວບັນດາເຜົ່າມີພັກປະຕິວັດນຳພາ ບັນດາອິດທິກຳລັງປໍລະປັກເວລາໃດກໍ່ຍຶດໝັ້ນໃນເປົ້າໝາຍຍຸດທະສາດແລະອອກແຮງປັ່ນປ່ວນທາງດ້ານຈິດຕະສາດ ມ້າງເພແນວຄິດ ແລະ ອຸດົມການສັງຄົມນິຍົມ; ດູດດຶງເອົາຜູ້ທີ່ມີຄວາມຄອນແຄນດ້ານຫຼັກໝັ້ນການເມືອງ ແລະ ມີທັດສະນະແຕກຕ່າງເພື່ອສ້າງເປັນຄົນທຸງຢູ່ພາຍໃນພັກ, ຊຸກຍູ້ສົ່ງເສີມຜູ້ນັ້ນໃຫ້ເປັນເຈົ້າກີເຈົ້າການຕ້ານ ແລະ ມ້າງພັກຂອງຕົນເອງຈາກພາຍໃນ ສະນັ້ນ ພວກເຮົາເວລາໃດກໍຕ້ອງມີສະຕິລະວັງຕົວ ທັງເປັນເຈົ້າການຕອບຕ້ານ ແລະ ຕີຖ່ອຍດ້ວຍທັດສະນະທ່າທີທີ່ເດັດຂາດເຂັ້ມງວດ.

ນັບແຕ່ມີມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 60/ກມສພ, ພັກເຮົາໄດ້ໃຫ້ຄວາມສຳຄັນ ແລະ ນຳພາຊີ້ນຳວຽກງານການເມືອງ-ແນວຄິດ ຢ່າງໃກ້ຊິດຕິດແທດ, ຖືເອົາວຽກງານການເມືອງ-ແນວຄິດເປັນແຖວໜ້າໃນການເຮັດໃຫ້ຈຸດໝາຍວຽກງານຍຸດທະສາດ ແລະ ໜ້າທີ່ຈຸດສຸມໃນພາລະກິດປຣູ່ນແປງໃໝ່ຢ່າງຮອບດ້ານທີ່ມີຫຼັກການຂອງພັກປະກົດຜົນເປັນຈິງ ເຖິງວ່າການຈັດຕັ້ງຜັນຂະຫຍາຍວຽກງານການເມືອງ-ແນວຄິດດຳເນີນໄປໃນສະພາບແວດລ້ອມສາກົນ ແລະ ພາກພື້ນຜັນແປໄປຢ່າງສັບສົນເຊິ່ງມີທັງກາລະໂອກາດ ແລະ ສິ່ງທ້າທາຍຕໍ່ການເຮັດວຽກງານແນວຄິດຂອງພັກເຮົາໃນການຍູ້ແຮງຂະບວນການປົກປັກຮັກສາ ແລະ ພັດທະນາປະເທດຊາດ, ການເປີດ ກ້ວາງການພົວພັນຮ່ວມມືທາງດ້ານເສດຖະກິດ, ວັດທະນະທຳ-ສັງຄົມກັບຕ່າງປະເທດ.

ຕໍ່ໜ້າສະພາບການຜັນແປສັບສົນຂອງໂລກ ແລະ ພາກພື້ນ ກໍຄື ສະພາບຄວາມຫຍຸ້ງຍາກພາຍໃນປະເທດນັ້ນ ພັກເຮົາໄດ້ເພີ່ມທະວີຄວາມເອົາໃຈໃສ່ໃນການນຳພາ ຊີ້ນຳວຽກງານແນວຄິດໃນທົ່ວພັກ, ທົ່ວກອງທັບ, ທົ່ວປວງຊົນ, ທຸກອົງການຈັດຕັ້ງຂອງພັກ-ລັດ, ອົງການຈັດຕັ້ງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນທຸກ

ຂັ້ນເອົາໃຈໃສ່ຄົ້ນຄ້ວາກໍາແໜ້ນສະພາບການພາຍໃນ ແລະ ສາກົນ, ເປັນເຈົ້າການເຂົ້າຮ່ວມສະກັດກັ້ນ ແລະ ທັບມ້າງການຫັນປ່ຽນໂດຍສັນຕິຂອງພວກຄົນບໍ່ດີ; ເສີມຂະຫຍາຍອັນທີ່ເປັນມູນເຊື້ອທີ່ດີ, ບົດຮຽນ ແລະ ແບບຢ່າງທີ່ໂດດເດັ່ນໃນການດໍາເນີນວຽກງານການເມືອງ-ແນວຄິດ, ຕີຖ່ອຍທັດສະນະ ແລະ ທ່າອ່ຽງທີ່ຝືນກັບແນວທາງຂອງພັກ, ສຸ່ມໃສ່ແກ້ໄຂຈຸດອ່ອນ ແລະ ຂໍ້ຄົງຄ້າງໃນການດໍາເນີນວຽກງານການເມືອງ-ແນວຄິດ, ຄົ້ນຄ້ວາ ແລະກໍານົດມາດຕະການ, ວິທີການດໍາເນີນວຽກງານການເມືອງ-ແນວຄິດໃນສະເພາະໜ້າແລະຍາວນານ ແນ່ໃສ່ເຮັດໃຫ້ວຽກງານແນວຄິດຕິດພັນກັບຂະບວນການຕົວຈິງໃນພາລະກິດແຫ່ງການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດເປັນຕົ້ນແມ່ນການຮັກສາສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບສຸກ, ແກ້ໄຂຄວາມທຸກຍາກຂອງປະຊາຊົນຕິດພັນກັບການກໍ່ສ້າງຮາກຖານການເມືອງ ແລະ ພັດທະນາຊົນນະບົດຮອບດ້ານ, ການຜະລິດເປັນສິນຄ້າ, ການຫັນເປັນອຸດສາຫະກໍາ ແລະ ຫັນເປັນທັນສະໄໝໂດຍເລີ່ມຈາກຂົງເຂດກະສິກໍາປ່າໄມ້ ແລະ ສ້າງບ້ານໃຫ້ກາຍເປັນຕົວເມືອງນ້ອຍຊົນນະບົດ.

ຕະຫຼອດໄລຍະຜ່ານມາ ພັກປະຊາຊົນປະຕິວັດລາວໄດ້ສຸ່ມໃສ່ກໍ່ສ້າງ, ປັບປຸງຖັນແຖວນັກຮົບແນວຄິດຂອງພັກໃນທຸກດ້ານ ແນໃສ່ເຮັດໃຫ້ພະນັກງານຜູ້ທີ່ເຮັດວຽກງານການເມືອງ-ແນວຄິດຫັນໄປສູ່ຄວາມເປັນມືອາຊີບຂອງຖັນແຖວນັກຮົບແນວຄິດທາງດ້ານການໂຄສະນາສຶກສາອົບຮົມ ທີ່ພັກເຮົາມີມູນເຊື້ອໃຫ້ນັບມື້ນັບຫຼາຍ ເພື່ອເປັນເສນາທິການໃຫ້ແກ່ສູນກາງພັກໃນການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ-ລັດ, ການໂຄສະນາ, ສຶກສາອົບຮົມ, ບໍາລຸງກໍ່ສ້າງຖັນແຖວພະນັກງານ, ນັກຮົບແນວຄິດໃຫ້ມີຄຸນສົມບັດ, ມີທັດສະນະປະຕິວັດ ແນໃສ່ເຮັດໃຫ້ທົ່ວພັກ, ທົ່ວກອງທັບ ແລະ ທົ່ວປວງຊົນຮັບຮູ້ ແລະ ເຊື່ອມຊຶມກໍາແໜ້ນມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ມະຕິຕ່າງໆສະໄໝທີ 11 ຕິດພັນກັບການລົງກໍ່ສ້າງຮາກຖານການເມືອງ, ການສ້າງບ້ານ ແລະ ກຸ່ມບ້ານພັດທະນາ, ສຶກສາອົບຮົມປະຊາຊົນບັນດາເຜົ່າ, ສາສະໜາ, ສຶກສາອົບຮົມເລຂາໜ່ວຍພັກນາຍບ້ານ, ຜູ້ເຮັດວຽກອົງການຈັດຕັ້ງມະຫາຊົນ, ຊາວໜຸ່ມ, ແມ່ຍິງ, ພະນັກງານຫຼັກແຫຼ່ງ, ສະມາຊິກພັກ, ພະນັກງານຜູ້ທີ່ເຮັດວຽກງານການເມືອງ-ແນວຄິດຢູ່ຮາກຖານເຫັນຄວາມສໍາຄັນວຽກງານການເມືອງ-ແນວຄິດ ແລະ ຖືເອົາວຽກງານການເມືອງ-ແນວຄິດ ເປັນເສັ້ນໄໝແດງທີ່ສອດຫ້ອຍໄປທຸກຂົງເຂດວຽກງານ ຮັບປະກັນໃຫ້ແນວທາງນະໂຍບາຍຂອງພັກລົງສູ່ມະຫາຊົນ ແລະ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີຜົນສໍາເລັດ.

ໃນຊຸມປີຕໍ່ໜ້າ ສະພາບການຂອງໂລກ ແລະ ພາຍໃນປະເທດ ຍັງມີສິ່ງທົດສອບທ້າທາຍຕໍ່ບົດບາດນໍາພາຂອງພັກເຮົາ, ພວກຄົນບໍ່ດີ ແລະ ອິດທິກໍາລັງປະຕິການ ຍັງຈະສືບຕໍ່ມ້າງເພທໍາລາຍພັກເຮົາ. ເຊິ່ງກ່ອນອື່ນໝົດແມ່ນມ້າງລະບົບແນວຄິດປະຕິວັດຂອງພວກເຮົາ. ການເປີດກວ້າງການພົວພັນຮ່ວມມື ແລະ ເຊື່ອມໂຍງດ້ານເສດຖະກິດກັບຕ່າງປະເທດ, ການນໍາໃຊ້ກົນໄກຕະຫຼາດ ແລະ ການແລກປ່ຽນທາງດ້ານວັດທະນະທໍາ ກໍເປັນສິ່ງທົດສອບທ້າທາຍອີກດ້ານໜຶ່ງຕໍ່ພວກເຮົາ. ບັນຫາສໍາຄັນອີກປະການໜຶ່ງ ແມ່ນກະໂຕພາຍໃນຂອງພວກເຮົາເອງ ກໍຍັງມີຈຸດອ່ອນຂໍ້ຄົງຄ້າງບໍ່ໜ້ອຍ ເປັນຕົ້ນແມ່ນການຈັດຕັ້ງປະຕິບັດສອງ ວາລະແຫ່ງຊາດ ຂອງພວກເຮົາ ເຊິ່ງສິ່ງຜົນກະທົບໂດຍກົງຕໍ່ບົດບາດ ແລະ ຄວາມສາມາດກໍາອໍານາດຂອງພັກເຮົາໃນເງື່ອນໄຂໃໝ່. ສະນັ້ນ ການເຮັດວຽກງານການເມືອງ-ແນວຄິດ ຍິ່ງຕ້ອງເພີ່ມທະວີຄວາມຂະຫຍັນຂັນແຂງ, ຕັ້ງໜ້າສຶກສາອົບຮົມເປົ້າໝາຍຕ່າງໆໃຫ້ເລິກເຊິ່ງ ແລະ ທົ່ວ

ເຖິງ, ຍູ້ແຮງການສຶກສາອົບຮົມນຳພາແນວຄິດ, ສະມາຊິກພັກ, ພະນັກງານ ແລະ ປະຊາຊົນໃຫ້ຮັບຮູ້, ເຊື່ອມຊຶມ, ກຳແໜ້ນແນວທາງນະໂຍບາຍຕ່າງໆຂອງພັກ-ລັດ ແລະ ສາມາດຈັດຕັ້ງຜັນຂະຫຍາຍໃຫ້ປະກົດຜົນເປັນຈິງ. ພະນັກງານຜູ້ທີ່ເຮັດວຽກງານການເມືອງ-ແນວຄິດ ຕ້ອງເພີ່ມທະວີຄວາມສະດຸ້ງໄວຕໍ່ແຕ່ລະເຫດການແຕ່ລະໄລຍະ, ຕ້ອງຮູ້ຄາດຄະເນສະພາບແນວຄິດຂອງພະນັກງານ ແລະ ປະຊາຊົນ, ຕ້ອງກຳໄດ້ທາດແທ້ຂອງກະແສແນວຄິດ, ວິທີການ ແລະ ຮູບການແກ້ໄຂຢ່າງເໝາະສົມ; ເອົາໃຈໃສ່ສຶກສາອົບຮົມນ້ຳໃຈຮັກຊາດແພງເຊື້ອ, ສຶກສາອົບຮົມໃຫ້ຄົນລາວທຸກຄົນມີຄວາມຮູ້ອັນຖືກຕ້ອງກ່ຽວກັບປະຫວັດສາດຂອງຊາດ, ຂອງພັກ, ເຊື່ອໝັ້ນຕໍ່ແນວທາງ ແລະ ການນຳພາຂອງພັກ, ເຊື່ອໝັ້ນຕໍ່ອຸດົມການສັງຄົມນິຍົມທີ່ພັກວາງໄວ້, ປູກສ້າງແນວຄິດເອກະລາດເປັນເຈົ້າຕົນເອງ, ມີຄວາມເອກອ້າງທະນົງໃຈຕໍ່ມູນເຊື້ອອັນອົງອາດກ້າແກ່ນ ແລະ ມູນມໍລະດົກວັດທະນາທຳອັນລ້ຳຄ່າຂອງຊາດເຮົາ.

ເພື່ອບັນລຸຈຸດປະສົງດັ່ງກ່າວຕ້ອງສືບຕໍ່ປັບປຸງເນື້ອໃນ ວິທີການ ແລະ ຮູບການວຽກງານການເມືອງ-ແນວຄິດ ຕື່ມອີກ, ຕ້ອງຮູ້ນຳໃຊ້ກາລະໂອກາດ ແລະ ນຳເອົາວຽກດີຄົນເດັ່ນ ໃນການຈັດຕັ້ງປະຕິບັດແນວທາງຂອງພັກ ເພື່ອເຮັດໃຫ້ວຽກງານໂຄສະນາ-ສຶກສາອົບຮົມສົມທົບກັບ ການໂຄສະນາສຶກສາອົບຮົມຜ່ານພາຫະນະສື່ທີ່ທັນສະໄໝ ແລະ ແຂງແຮງກັບການນຳໃຊ້ຮູບການສຶກສາອົບຮົມທີ່ເປັນມູນເຊື້ອ ເພື່ອນຳເອົາແນວທາງນະໂຍບາຍຂອງພັກ, ແຫຼ່ງຂ່າວທີ່ຖືກຕ້ອງຊັດເຈນ ແລະ ເປັນລະບົບລົງສູ່ມະຫາຊົນຢ່າງທ່ວງທັນໃນຂອບເຂດທົ່ວປະເທດ. ທັງນີ້ ກໍເພື່ອຍົກລະດັບຄວາມຕື່ນຕົວຂອງປະຊາຊົນ ໃຫ້ຮູ້ຈຳແນກອັນຜິດ-ອັນຖືກ, ຮູ້ຕຳນິວິຈານ ແລະ ຮູ້ຕ້ານຄືນຖ້ອຍທຳນອງບິດເບືອນໃສ່ຮ້າຍປ້າຍສີຂອງສັດຕູ ແລະ ກຸ່ມຄົນບໍ່ຫວັງດີ; ຕ້ອງໄດ້ປັບປຸງປ່ຽນແປງອົງການທີ່ເຮັດວຽກງານການເມືອງ-ແນວຄິດ ຢູ່ຂັ້ນຕ່າງໆໃຫ້ມີຄວາມເຂັ້ມແຂງຕື່ມອີກ, ຕ້ອງສ້າງໃຫ້ມີການຫັນປ່ຽນທີ່ຕັ້ງໜ້າ ໃນການເຄື່ອນໄຫວວຽກງານທຸກດ້ານຂອງມະຫາຊົນຢູ່ຮາກຖານ ເພື່ອຊອກເຫັນປັດໄຈທີ່ຕັ້ງໜ້າ ແລະ ຍ້ອງຍໍວຽກດີຄົນເດັ່ນ ແນໃສ່ເສີມຂະຫຍາຍໃຫ້ກວ້າງຂວາງ ແລະ ເປັນຂະບວນຟົດຟື້ນ.

ໃນສະເພາະໜ້ານີ້ ຕ້ອງເລັ່ງໃສ່ຄົ້ນຄວ້າ ແລະ ມີນະໂຍບາຍອັນສົມເຫດສົມຜົນຕໍ່ຖັນແຖວພະນັກງານຜູ້ເຮັດວຽກງານການເມືອງ-ແນວຄິດ ໄປພ້ອມກັບການບຳລຸງກໍ່ສ້າງເຂົາເຈົ້າຢ່າງເປັນລະບົບ, ຕ້ອງເອົາໃຈໃສ່ສຶກສາອົບຮົມຖັນແຖວພະນັກງານທີ່ເຮັດວຽກງານການເມືອງ-ແນວຄິດ ຂອງພັກເຮົາໃຫ້ມີຫຼັກໝັ້ນການເມືອງໜັກແໜ້ນ, ມີຄຸນສົມບັດສົນທຳປະຕິວັດ ແລະ ມີແບບແຜນດຳລົງຊີວິດກ້າວໜ້າສົດໃສ, ກຳແໜ້ນແນວທາງນະໂຍບາຍຂອງພັກ, ຮູ້ເຮັດວຽກສຶກສາອົບຮົມນຳພາແນວຄິດຂອງມະຫາຊົນ, ຮູ້ໂຄສະນາເຜີຍແຜ່ແນວທາງນະໂຍບາຍຕ່າງໆຂອງພັກ ໂດຍສະເພາະແມ່ນເນື້ອໃນກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ມະຕິເລກທີ 206/ກມສພ ວ່າດ້ວຍການຍົກສູງຄຸນນະພາບວຽກງານການເມືອງ-ແນວຄິດ ໃນໄລຍະໃໝ່, ແຜນພັດທະນາເສດຖະກິດສັງຄົມຄັ້ງທີ IX ຂອງລັດ ໃຫ້ມະຫາຊົນເຂົ້າໃຈ ພ້ອມທັງເປັນເຈົ້າການນຳພາເຂົາເຈົ້າປະຕິບັດໃຫ້ເກີດຜົນ ເພື່ອນຳພາປະເທດຊາດຂອງພວກເຮົາຫຼຸດພົ້ນອອກຈາກຄວາມທຸກຍາກ ແລະ ຄວາມດ້ອຍພັດທະນາ.

ຄະນະໂຄສະນາອົບຮົມແຕ່ລະຂັ້ນ ຕ້ອງບຸກບືນເຮັດໃຫ້ຫຼ້ອນບົດບາດ ເປັນເສນາທິການແກ່ຄະນະພັກ, ຊ່ວຍຄະນະພັກຄົ້ນຄວ້າເນື້ອໃນ, ວິທີການ, ຮູບການເຄື່ອນໄຫວວຽກງານການເມືອງ-ແນວຄິດ ໃຫ້ມີປະສິດທິຜົນ, ປະສານສົມທົບບັນດາພາກສ່ວນກ່ຽວຂ້ອງຕ່າງໆ ໃນອົງການພັກ-ລັດ ແລະ ອົງການຈັດຕັ້ງມະຫາຊົນ ເພື່ອພ້ອມກັນ

ເຮັດວຽກງານການເມືອງ-ແນວຄິດໃຫ້ດີຂຶ້ນຢ່າງບໍ່ຢຸດຢັ້ງ; ຕ້ອງກຳແໜ້ນມະຕິ 206/ກມສພ ເປັນຕົ້ນແມ່ນທິດທາງວຽກງານໃນຕໍ່ໜ້າ ຄື:

**ໜຶ່ງ,** ສືບຕໍ່ຈັດຕັ້ງປະຕິບັດບັນດາໂຄງການຄົ້ນຄວ້າທິດສະດີ ແລະ ສັງລວມພຶດຕິກຳ ທີ່ສູນກາງພັກກຳນົດໃຫ້ສຳເລັດຜົນ ແລະ ຮັບປະກັນຄຸນນະພາບ, ນັບທັງໂຄງການຄົ້ນຄວ້າແນວຄິດ ໄກສອນ ພົມວິຫານ; ເອົາໃຈໃສ່ຄົ້ນຄວ້າພຶດຕິກຳໃຫ້ເລິກເຊິ່ງທັງຈາກຜົນສຳເລັດ ແລະ ຄວາມຂາດຕົກບົກຜ່ອງ ໃນການພັດທະນາເສດຖະກິດ-ສັງຄົມ, ການກໍ່ສ້າງ ແລະ ປັບປຸງພັກໃນໄລຍະຜ່ານມາໃຫ້ເລິກເຊິ່ງ, ຖອດໃຫ້ໄດ້ບັນຫາທີ່ເປັນພື້ນຖານຮັບໃຊ້ການປັບປຸງບູລະນະແນວທາງນະໂຍບາຍຂອງພັກ.

**ສອງ,** ປັບປຸງຫຼັກສູດທິດສະດີການເມືອງຢູ່ສະຖາບັນການສຶກສາຕ່າງໆ ເຊິ່ງທັງຕ້ອງຮັບປະກັນການສະໜອງຫຼັກມູນທິດສະດີການເມືອງອັນເປັນພື້ນຖານ, ຄວາມຮູ້ກ່ຽວກັບພັກ ແລະ ປະຫວັດສາດຂອງຊາດ ຢ່າງເປັນລະບົບຕອບສະໜອງການເລັ່ງທວງຂອງສະພາບການໃນໄລຍະໃໝ່ ແລະ ແທດເໝາະກັບແຕ່ລະເປົ້າໝາຍ ທີ່ເຂົ້າຮ່ຳຮຽນຢູ່ສະຖາບັນການເມືອງ-ການປົກຄອງທ້ອງຖິ່ນ, ສະຖາບັນການສຶກສາທັງພາກລັດ ແລະ ເອກະຊົນ.

**ສາມ,** ເອົາໃຈໃສ່ກຳແໜ້ນສະພາບການໂຄສະນາບິດເບືອນ, ໃສ່ຮ້າຍປ້າຍສີຂອງອິດທິກຳລັງປໍລະປັກ, ສະພາບແນວຄິດ, ທາງສຽງສັງຄົມ ໄປຄຽງຄູ່ກັບການຄົ້ນຄວ້າວິເຄາະວິໄຈ ເພື່ອເຫັນໄດ້ບັນຫາທີ່ຕ້ອງແກ້ໄຂຢ່າງຖືກຕ້ອງທັນການ. ຈາກນັ້ນ ສ້າງ ແລະ ປັບປຸງເອກະສານສຶກສາອົບຮົມການເມືອງ-ແນວຄິດ ໃຫ້ເປັນຫົວຂໍ້ສະເພາະດ້ວຍເນື້ອໃນທີ່ເໝາະສົມກັບສະພາບການຕົວຈິງ ແລະ ສຸມໃສ່ແກ້ໄຂບັນຫາການເມືອງ-ແນວຄິດ ຢ່າງມີຈຸດສຸມຕາມແຕ່ລະເປົ້າໝາຍ... ແນໃສ່ຍົກສູງສະຕິລະວັງຕົວ ແລະ ມີຄວາມເດັດຂາດໃນການຕ້ານ ແລະ ແກ້ໄຂຕໍ່ການເກີດສະພາບຫັນປ່ຽນທີ່ບໍ່ດີຈາກພາຍໃນຂອງຕົນເອງ ຢ່າງແຂງແຮງ.

**ສີ່,** ປັບປຸງ ແລະ ຍົກສູງຄຸນນະພາບຂອງການຈັດຕັ້ງ ແລະ ຖັນແຖວພະນັກງານ ທີ່ເຮັດວຽກງານໃນຂົງເຂດການເມືອງ-ແນວຄິດ ແລະ ການເຄື່ອນໄຫວຂອງອົງການດັ່ງກ່າວ ໂດຍສຸມໃສ່ບາງດ້ານດັ່ງນີ້:

- ຈັດຕັ້ງຝຶກອົບຮົມທາງດ້ານທິດສະດີການເມືອງ, ແນວທາງຂອງພັກ, ລະບຽບກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ ໃຫ້ນັກໂຄສະນາປາຖະກະຖາ, ນັກບັນນາທິການ, ນັກຂຽນຂ່າວ, ໜັງສືພິມໃຫ້ມີຄວາມຮູ້ຄວາມສາມາດພຽງພໍໃນການເຄື່ອນໄຫວວຽກງານຂອງຕົນ ດ້ວຍຄວາມໜັກແໜ້ນ, ເຂັ້ມແຂງ, ວ່ອງໄວ ແລະ ທັນການ.

- ເອົາໃຈໃສ່ນຳພາ-ຊີ້ນຳວຽກງານຖະແຫຼ່ງຂ່າວ ແລະ ສື່ມວນຊົນ ໃຫ້ມີການເຄື່ອນໄຫວແຂງແຮງ, ແຫຼມຄົມ ແລະ ທັນການກວ່າເກົ່າ; ພ້ອມກັນນັ້ນ ຕ້ອງເອົາໃຈໃສ່ຄຸ້ມຄອງການເຄື່ອນໄຫວດ້ານສິລະປະວັນນະຄະດີ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ; ຮັບປະກັນການເຜີຍແຜ່, ຖ່າຍທອດຮີດຄອງປະເພນີ, ຄ່ານິຍົມອັນດີງາມຂອງຊາດ, ປະສົມປະສານ ກັບຮັບເອົາສິ່ງຍອດຍິ່ງຂອງຍຸກສະໄໝຢ່າງເປັນເຈົ້າການ.

- ເພີ່ມທະວີການຄຸ້ມຄອງການບໍລິການອິນເຕີເນັດ, ນັບທັງຄຸ້ມຄອງຜະລິດຕະພັນສື່ ແລະ ອຸປະກອນຮັບ-ສົ່ງສັນຍານອອນລາຍ ຕາມກົດໝາຍຢ່າງເຂັ້ມງວດ. ພ້ອມກັນນັ້ນ ກໍຕ້ອງປະຕິບັດມາດຕະການຢ່າງເດັດຂາດຕໍ່ຜູ້ໂຄສະນາ, ເຜີຍແຜ່, ແຈກຢາຍສິ່ງພິມ, ສື່ເອເລັກໂຕຣນິກ ທີ່ມີເນື້ອໃນບິດເບືອນ, ໃສ່ຮ້າຍປ້າຍສີ ໂດຍມີເຈດຕະນາ

ສ້າງຄວາມສັບສົນດ້ານແນວຄິດຈິດຕະສາດ ເພື່ອແບ່ງແຍກ ແລະ ມ້າງເພຄວາມສະຫງົບທາງດ້ານການເມືອງ ແລະ ຄວາມໝັ້ນຄົງຂອງປະເທດຊາດ, ນັບທັງຜູ້ເຜີຍແຜ່ສິ່ງພິມ ທີ່ບໍ່ສອດຄ່ອງກັບວັດທະນະທຳ ແລະ ປະເພນີອັນດີງາມຂອງຊາດ ທີ່ມີກົດໝາຍຫ້າມ, ເພື່ອຮັບປະກັນຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພທາງສັງຄົມ.

- ສ້າງ ແລະ ປັບປຸງຍົກລະດັບຄວາມແຮງ ຂອງສະຖານີວິທະຍຸ, ໂທລະພາບ ເພື່ອກະຈາຍສຽງ, ແຜ່ພາບໄດ້ໄກ ແລະ ທົ່ວເຖິງ; ເພີ່ມກຳລັງພະນັກງານ ແລະ ອຸປະກອນ-ເຕັກນິກຮັບໃຊ້ການໂຄສະນາ ແລະ ອົບຮົມໃຫ້ຂັ້ນເມືອງ, ສ້າງຕາໜ່າງນັກປາຖະກະຖາຢູ່ຮາກຖານຕ່າງໆ, ຊຸກຍູ້ ແລະ ປັບປຸງກອງໂຄສະນາເຄື່ອນທີ່ຂອງແຂວງ, ຂອງເມືອງ ໄດ້ເຄື່ອນໄຫວຢ່າງເປັນປົກກະຕິ ແລະ ແຂງແຮງກວ່າເກົ່າ ເພື່ອຍົກສູງຄວາມສາມາດໃນການໂຄສະນາເຜີຍແຜ່ແນວທາງນະໂຍບາຍຂອງພັກ ແລະ ລັດ, ສະພາບການທີ່ພົ້ນເດັ່ນ, ສາລະໜ້າຮູ້ດ້ານຕ່າງໆ ໃຫ້ເລິກເຊິ່ງ ແລະ ທົ່ວເຖິງທຸກເປົ້າໝາຍ ໂດຍສະເພາະແມ່ນປະຊາຊົນຢູ່ເຂດຫ່າງໄກສອກຫຼີກ.

**ຫ້າ,** ເພີ່ມທະວີການສຶກສາອົບຮົມການເມືອງ-ແນວຄິດ ໃຫ້ຄົນຮຸ່ນໜຸ່ມ ເປັນຕົ້ນແມ່ນເຍົາວະຊົນ, ຊາວໜຸ່ມໃຫ້ຮູ້ໄດ້ມູນເຊື້ອຂອງພັກ, ຂອງຊາດ, ຂອງບັນພະບູລຸດເຮົາ, ມີຈິດໃຈຮັກຊາດ-ຮັກລະບອບໃໝ່, ມີຄວາມຕື່ນຕົວທາງດ້ານການເມືອງສູງ, ເປັນພົນລະເມືອງດີຂອງຊາດ, ມີຄວາມສາມັກຄີເອື້ອເຟື້ອເພື່ອແຜ່ຊ່ວຍເຫຼືອກັນ, ມີຄວາມກະຕັນຍູ້ຮູ້ບຸນຄຸນ, ສຸພາບຮຽບຮ້ອຍ, ສັດຊື່, ປະຢັດ, ຊື່ດທ່ຽງ, ດຸໝັ້ນ, ອາດຫານ, ອົດທົນ; ມີຄວາມຫ້າວຫັນໃນການຄົ້ນຄິດປະດິດສ້າງ ແລະ ສະແຫວງຫາຄວາມກ້າວໜ້າທາງດ້ານວິທະຍາສາດເຕັກໂນໂລຊີນະວັດຕະກຳ ແລະ ພູມປັນຍາແຫ່ງຍຸກສະໄໝ.

ໃນຊຸມປີຕໍ່ໜ້າການດຳເນີນວຽກງານການເມືອງ-ແນວຄິດ ກໍຍັງຕ້ອງສຸມໃສ່ເຜີຍແຜ່ ແລະ ສຶກສາອົບຮົມພະນັກງານສະມາຊິກພັກ ໃຫ້ມີຄວາມຮູ້ເລິກເຊິ່ງ ແລະ ເປັນລະບົບກ່ຽວກັບທິດສະດີມາກ-ເລນິນ, ລັດທິສັງຄົມນິຍົມ, ລະບອບປະຊາທິປະໄຕປະຊາຊົນ, ແນວທາງປ່ຽນແປງໃໝ່, ກ່ຽວກັບການນຳພາຂອງພັກ ການຄຸ້ມຄອງຂອງລັດໃນເງື່ອນໄຂດຳເນີນເສດຖະກິດຕະຫຼາດ ແລະ ເປີດກວ້າງການພົວພັນຮ່ວມມືກັບຕ່າງປະເທດ, ກ່ຽວກັບຫຼັກໝັ້ນຊົນຊັ້ນ, ຄຸນສົມບັດສົນທຳປະຕິວັດ ນ້ຳໃຈຮັກຊາດແພງເຊື້ອ, ສະຕິຊາດເອກະລາດເປັນເຈົ້າຕົນເອງ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ. ການດຳເນີນວຽກງານແນວຄິດ ຕ້ອງບັນລຸເຮັດໃຫ້ທົ່ວພັກ, ທົ່ວປວງຊົນເຮົາ ມີຄວາມເຊື່ອໝັ້ນຢ່າງໜັກແໜ້ນຕໍ່ແນວທາງ ແລະ ການນຳພາຂອງພັກ ມີຄວາມສາມັກຄີເປັນເອກະພາບໃນທົ່ວພັກ ແລະ ຕື່ນຕົວເປັນເຈົ້າການປະຕິບັດແນວທາງຂອງພັກໃຫ້ປະກົດຜົນເປັນຈິງ.

ພ້ອມກັນນັ້ນ ວຽກງານການເມືອງ-ແນວຄິດ ຕ້ອງຕັ້ງໜ້າປະກອບສ່ວນໃນການກໍ່ສ້າງພັກ ໃຫ້ມີຄວາມເຂັ້ມແຂງທາງດ້ານການເມືອງ-ແນວຄິດ, ທາງດ້ານການຈັດຕັ້ງ, ມີລະບຽບວິໄນເຂັ້ມງວດ, ເຮັດໃຫ້ສະມາຊິກພັກແຕ່ລະສະຫາຍຕ້ອງປະຕິບັດກົດລະບຽບຂອງພັກຢ່າງເຄັ່ງຂັດ, ອັນສຳຄັນຕົ້ນຕໍແມ່ນການປະຕິບັດຫຼັກການພື້ນຖານທັງສອງດ້ານຄື:

- ດ້ານໜຶ່ງ ແມ່ນເສີມຂະຫຍາຍປະຊາທິປະໄຕພາຍໃນພັກຢ່າງເລິກເຊິ່ງ ແລະ ກວ້າງຂວາງ, ແຕ່ດ້ານໜຶ່ງແມ່ນຕ້ອງເຄົາລົບ ແລະ ປະຕິບັດໃຫ້ຖືກຕ້ອງຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ ທີ່ເປັນຫຼັກ ການສູງສຸດຂອງພັກ, ສ້າງຄວາມເປັນເອກະພາບພາຍໃນພັກຢ່າງເຂັ້ມງວດ, ຄະນະພັກຕ້ອງສົມທົບປະສານການນຳພາເປັນໝູ່ຄະນະກັບການເພີ່ມທະວີຄວາມຮັບຜິດຊອບຂອງບຸກຄົນຢ່າງກົມກຽວ, ເປັນເຈົ້າການປົກປັກຮັກສາລະ ບອບ

ການນຳພາເປັນໝູ່ຄະນະເປັນສຳຄັນ; ຕ້ອງເພີ່ມການກວດກາຕີລາຄາຜົນການປະຕິບັດໜ້າທີ່ຂອງບຸກຄົນໃນໝູ່ຄະນະໃຫ້ເປັນປົກກະຕິ. ຕ້ອງຖືສຳຄັນ ແລະ ເອົາໃຈໃສ່ດຳເນີນການຕິຊົມຕົນເອງ ແລະ ຕິຊົມກັນຢ່າງເປັນປະຈຳ. ສືບຕໍ່ສ້າງໜ່ວຍພັກປອດໃສ ເຂັ້ມແຂງ ໜັກແໜ້ນ, ຕ້ອງມີແຜນການລະອຽດ ກ່ຽວກັບການປັບປຸງ ແລະ ຍົກສູງຄວາມສາມາດນຳພາຂອງໜ່ວຍພັກ. ຕັ້ງໜ້າບຳລຸງສ້າງສະມາຊິກພັກ ແລະ ພະນັກງານທີ່ເຮັດວຽກງານແນວຄິດໜຸ່ມນ້ອຍໃຫ້ມີຄວາມຮູ້ຄວາມສາມາດ ເພື່ອສ້າງເປັນພະນັກງານສະມາຊິກພັກສືບທອດປ່ຽນແທນ ເພື່ອແບກຫາບພາລະໜ້າທີ່ອັນໜັກໜ່ວງ ໃນສະເພາະໜ້າ ແລະ ຍາວນານ.

- ການສ້າງ ແລະ ປັບປຸງຄວາມເຂັ້ມແຂງດ້ານການຈັດຕັ້ງພັກນັ້ນ ຍາມໃດກໍຕ້ອງຕິດແໜ້ນກັບການເຊີດຊູຄວາມເປັນແບບຢ່າງຂອງຄະນະພັກ ແລະ ສະມາຊິກພັກທຸກສະຫາຍ. ຄວາມເປັນແບບຢ່າງນຳໜ້າທີ່ດີ ຕ້ອງສະແດງອອກຢ່າງເດັ່ນຊັດ ໃນນ້ຳໃຈຮັບຜິດຊອບ, ເຮັດວຽກອັນໃດກໍຕ້ອງໃຫ້ເກີດໝາກເກີດຜົນ, ມີຄວາມບຸກບືນສູ້ຊົນປະຕິບັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍໃຫ້ສຳເລັດດ້ວຍຄຸນນະພາບດີ ແລະ ທັນເວລາ, ເຮັດວຽກແມ່ນເພື່ອຜົນປະໂຫຍດລວມ, ເພື່ອຊາດ ແລະ ເພື່ອປະຊາຊົນ. ພ້ອມກັນນັ້ນ ກໍເປັນແບບຢ່າງໃນການດຳລົງຊີວິດທີ່ປອດໃສ, ດຸໝັ່ນ, ປະຢັດ, ຊື່ສັດ, ບໍ່ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອສະແຫວງຫາຜົນປະໂຫຍດສ່ວນຕົວ.

ສະມາຊິກພັກແຕ່ລະສະຫາຍ ຕ້ອງຕັ້ງໜ້າຝຶກຝົນຕົນເອງທາງດ້ານຄຸນສົມບັດສິນທຳປະຕິວັດ ຕ້ອງດຸໝັ່ນພາກພຽນ ຄົ້ນຄວ້າຮ່ຳຮຽນທິດສະດີມາກ-ເລນິນ, ແນວຄິດໄກສອນ ພົມວິຫານ, ແນວທາງນະໂຍບາຍຂອງພັກ, ຮ່ຳຮຽນວິຊາສະເພາະ ຍົກລະດັບຄວາມຮູ້, ຄວາມສາມາດຂອງຕົນໃຫ້ສູງຂຶ້ນຢ່າງບໍ່ຢຸດຢັ້ງ.

- ສິ່ງສຳຄັນປະການໜຶ່ງ, ວຽກງານການເມືອງ-ແນວຄິດ ຕ້ອງປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນການປັບປຸງແບບແຜນການນຳພາຂອງພັກ ແນໃສ່ຍົກສູງບົດບາດເປັນແກນນຳຂອງພັກໃນທຸກດ້ານ, ຕັ້ງໜ້າເສີມຂະຫຍາຍມູນເຊື້ອ ແບບແຜນການເຄື່ອນໄຫວນຳພາຕາມແນວທາງມະຫາຊົນ, ອີງໃສ່ມະຫາຊົນ ຂຸດຄົ້ນກຳລັງແຮງຂອງມະຫາຊົນ ເພື່ອປະຕິບັດແນວທາງນະໂຍບາຍຂອງພັກ. ຕ້ອງຕໍ່ສູ້ກຳຈັດປັດເປົ່າພະຍາດອາດຍາສິດ ບໍລິຫານໃຊ້ຄຳສັ່ງໃນການເຄື່ອນໄຫວນຳພາ, ຕ້ອງຖືການຂົນຂວາຍປຸກລະດົມສົມທົບກັບຄວາມເປັນແບບຢ່າງນຳພາຂອງສະມາຊິກພັກ ແລະ ການຈັດຕັ້ງຂອງພັກ ເປັນແບບແຜນ ແລະ ວິທີການນຳພາຕົ້ນຕໍຂອງພັກ. ຕ້ອງຟັງຄຳຄິດຄຳເຫັນຂອງມະຫາຊົນ, ຮັບເອົາການຕຳນິຕິຊົມຂອງມະຫາຊົນ, ຄະນະພັກ ແລະ ສະມາຊິກພັກຕ້ອງຢຶດໝັ້ນສັດຈະທຳ ແລະ ຄວາມເປັນຈິງ, ມີການປຶກສາຫາລືແລກປ່ຽນຄວາມເຫັນ ກ່ຽວກັບບັນຫາສຳຄັນໃນມະຕິຕ່າງໆຂອງພັກ, ແຜນການເຄື່ອນໄຫວຂອງຄະນະພັກຕ້ອງໃຫ້ສອດຄ່ອງກັບສະພາບຕົວຈິງ; ຕ້ອງຕິດຕາມ, ກວດກາການຈັດຕັ້ງປະຕິບັດເປັນປົກກະຕິ, ມີການສະຫຼຸບຕີລາຄາຜົນໄດ້ຮັບ ແລະ ຖອດຖອນບົດຮຽນຢ່າງເປັນປະຈຳ, ຕ້ອງຂະຫຍາຍປັດໄຈໃໝ່ແຫ່ງຜົນສຳເລັດ ແລະ ແກ້ໄຂຂໍ້ຄົງຄ້າງຢ່າງໄວວາ, ວາງມະຕິ ແລະ ມອບວຽກໃຫ້ກັນແລ້ວ ຕ້ອງປະຕິບັດໃຫ້ເກີດຜົນ, ຕ້ານປະກົດການເວົ້າຫຼາຍແຕ່ເຮັດໜ້ອຍ ຫຼື ຂາດຄວາມຮັບຜິດຊອບ.